# ນັກທຸລະກິດຊັ້ນນຳຂອງລາວເຫັນພ້ອມໃນການໃຊ້ເງິນກີບ



*ຂ່າວ-ພາບ: ຣັດສະໝີ ດວງສັດຈະ

ໃນເວທີປຶກສາຫາລືກ່ຽວກັບການສົ່ງເສີມການນຳໃຊ້ເງິນກີບເຊິ່ງໄດ້ຈັດຂຶ້ນໂດຍທະນາຄານແຫ່ງ ສປປ ລາວ (BOL) ເມື່ອວັນທີ 5 ກຸມພາ ຜ່ານມາໂດຍການເປັນປະທານຂອງ ທ່ານ ນາງ ດາລີ ພົນເສນາ ຫົວໜ້າກົມນະໂຍບາຍເງິນຕາ BOL ແລະ ໄດ້ເຊື້ອເຊີນບັນດານັກທຸລະກິດຊັ້ນນຳຂອງເມືອງລາວນັບທັງພາກລັດ ແລະ ພາກເອກະຊົນໃນວົງການຕ່າງໆເຂົ້າຮ່ວມ.

ໃນການປຶກສາຫາລືແມ່ນໄດ້ຄົ້ນຄ້ວາໃນຫຼາຍບັນຫາທີ່ປິ່ນອ້ອມລັດຖະບັນຍັດຂອງປະທານປະເທດ-ດຳລັດຂອງນາຍົກລັດຖະມົນຕີກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບ. ອັນໄດ້ເຮັດໃຫ້ບັນດາປະທານສະມາຄົມ-ປະທານກຸ່ມການຜະລິດ ແລະ ຜູ້ປະກອບການສົ່ງອອກ-ນຳເຂົ້າຊີ່ດັ່ງມີຄວາມສົນໃຈ, ໃຫ້ຂໍ້ຄິດເຫັນທີ່ສ້າງສັນ ແລະ ເປັນປະໂຫຍດ ເຊິ່ງພ້ອມຈະໃຫ້ການຮ່ວມມື, ຈາກນັ້ນ ກໍ່ມີການປະກອບຄຳເຫັນທີ່ສໍ່ສະແດງເຖິງຈິດໃຈຮັກຊາດ ເໝືອນດັ່ງຫຼາຍປະເທດທີ່ປະຕິເສດ ຕໍ່ການນຳໃຊ້ເງິນຕາຂອງປະເທດອື່ນແບບຊະຊາຍ ແລະ ມີພຽງແຕ່ນຳໃຊ້ສະກຸນເງິນຂອງປະເທດຕົນ, ທ່ານ ສີໝຸກ ສີສົມບັດ ປະທານຜູ້ສົ່ງອອກກາເຟລາວ ໄດ້ໃຫ້ທັດສະນະເຖິງການແຂ່ງຄ່າຂອງເງິນກີບ, ຄວາມເຊື່ອໝັ້ນຂອງສັງຄົມຕໍ່ກັບເງິນກີບ ແລະ ບັນຫາອື່ນໆ, ທ່ານ ບຸນລ້ຳ ຈາກເບຍລາວກໍ່ເຜີຍເຖິງນະໂຍບາຍເບຍລາວໃນການນຳໃຊ້ເງິນກີບ ເຊິ່ງບໍລິສັດແມ່ນຮັບ-ຈ່າຍ ເປັນເງິນກີບໂດຍຜ່ານລະບົບທະນາຄານ, ການຕິດລາຄາ-ແຈ້ງລາຄາສິນຄ້າກໍ່ເປັນເງິນກີບເມື່ອລູກຄ້ານຳເງິນຕາຕ່າງປະເທດມາຊື້ ທາງພະແນກການຂາຍກໍ່ແນະນຳເອົາ

ເງິນກີບມາຊໍາລະ, ຖ້າບໍລິສັດສັ່ງຊື້ສິນຄ້າອື່ນໃດເຂົ້າມາກໍ່ຈະຕັ້ງລາຄາເປັນເງິນກີບ. ທ່ານ ນາງ ບຸນທະວີ ຈຸນລະມະນີ ປະທານກຸ່ມບໍລິສັດເກືອລາວ ກໍ່ໄດ້ຍົກຍ້ອງນະໂຍບາຍສົ່ງເສີມການນໍາໃຊ້ເງິນກີບຂອງລັດຖະບານ ເຊິ່ງເຫັນວ່າປະຈຸບັນສັງຄົມໄດ້ມີການຖືຄອງ ແລະ ນໍາໃຊ້ເງິນກີບຫຼາຍຂຶ້ນ ແຕ່ພ້ອມດຽວກັນນັ້ນກໍ່ຄວນມີມາດຕະການອັນເໝາະສົມສັກສິດ ແລະ ທັນການຕໍ່ຜູ້ລ່ວງລະເມີດໃນດ້ານການຈໍາໜ່າຍເກືອກໍ່ຂາຍ-ເກັບເປັນເງິນກີບ ແລະ ຖອກເຂົ້າທະນາຄານໄດ້ດອກເບ້ຍເປັນເງິນກີບ, ແຕ່ການແຂງຄ່າຂອງເງິນກີບຂຶ້ນເລື້ອຍໆ ອາດບໍ່ເປັນຜົນດີຕໍ່ພາກສົ່ງອອກນັບທັງການສົ່ງອອກເກືອລາວນໍາອີກ; ນອກນີ້ຍັງມີຄໍາເຫັນຫຼາຍບັນຫາທີ່ສ່ອງແສງໃຫ້ເຫັນຄວາມ ເປັນຈິງເຊິ່ງມັນໄດ້ສ້າງປະໂຫຍດໃຫ້ແກ່ການຜະລິດການສົ່ງເສີມການນໍາໃຊ້ເງິນກີບ.

ທ່ານຫົວໜ້າກົມນະໂຍບາຍເງິນຕາBOL ໄດ້ຊື່ນຊົມຕໍ່ໝາກຜົນແຫ່ງການມີສ່ວນຮ່ວມຂອງທຸກຝ່າຍໃນສັງຄົມໂດຍແມ່ນທະນາຄານແຫ່ງ ສປປ ລາວ ເປັນໃຈກາງ ແລະ ໂດຍພາຍໃຕ້ການຊີ້ນໍາຂອງພັກ, ລັດຖະບານ ແລະ ໄດ້ຮັບຄວາມເອົາໃຈໃສ່ໃຫ້ການຮ່ວມມືຊ່ວຍເຫຼືອຂອງຄະນະພັກ-ອໍານາດການປົກຄອງທ້ອງຖິ່ນ, ປະຊາຊົນຊັ້ນຄົນຕ່າງໆ, ພ້ອມນີ້ຍັງໄດ້ຮຽກຮ້ອງມາຍັງບັນດາປະທານສະມາຄົມ, ປະທານກຸ່ມການຜະລິດ, ຜູ້ປະກອບການ ແລະ ນັກທຸລະກິດ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງຈົ່ງພ້ອມກັນເຜີຍແຜ່ຕິດຕາມ ແລະ ກວດກາໃນການຕິດ-ການປະກາດ-ຮັບຊໍາລະລາຄາສິນຄ້າ ແລະ ຄ່າບໍລິການຕ່າງໆເປັນເງິນກີບ ແລະ ພ້ອມກັນນັ້ນກໍ່ມີມາດຕະການຕໍ່ຜູ້ລະເມີດລະບຽບກົດໝາຍຢ່າງເຂັ້ມງວດ.